# ບຸລິມະສິດພິເສດຂອງຜູ້ຖືຮຸ້ນ

*ຂ່າວໂດຍ: ທ່ານ ນ. ທິບດາວອນ ວິລະວົງ*

ໃນປະເທດລາວເຮົາ "ຮຸ້ນ[1]" ຍັງເປັນຜະລິດຕະພັນໃໝ່, ຜ່ານມາສັງຄົມເຮົາຍັງບໍ່ທັນມີຄວາມຮູ້ ແລະ ຄວາມເຂົ້າໃຈພຽງພໍກ່ຽວກັບ ການຊື້-ຂາຍຮຸ້ນ, ແຕ່ພາຍຫຼັງທີ່ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄ ຊ) ກໍ່ຄື ທຸກໆພາກສ່ວນທີ່ມີສ່ວນຮ່ວມໃນຕະຫຼາດທຶນ ໄດ້ໃຫ້ຄວາມເອົາໃຈໃສ່ໃນການໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ທັງພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ກໍ່ເຫັນວ່າປະຊາຊົນຈຳນວນໜຶ່ງເລີ່ມມີຄວາມສົນໃຈ ແລະ ເຂົ້າໃຈຂັ້ນພື້ນຖານ ກ່ຽວກັບວຽກງານຕະຫຼາດທຶນ ແລະ ເກີດມີຄວາມສົນໃຈໃນການລົງທຶນໃນຮຸ້ນ. ແຕ່ກໍ່ຍັງມີປະຊາຊົນສ່ວນໜຶ່ງຍັງບໍ່ທັນເຂົ້າໃຈວ່າ ຖ້າຫາກຊື້ຮຸ້ນຂອງບໍລິສັດໃດໜຶ່ງແລ້ວ ຈະມີສິດທິພິເສດຫຍັງແດ່ໃຫ້ກັບຕົນເອງ. ສະນັ້ນ, ບົດຄວາມນີ້ຈະຊ່ວຍແກ້ໄຂຂໍ້ຂ້ອງໃຈໃຫ້ແກ່ບັນດາທ່ານທີ່ຍັງມີຂໍ້ສົງໃສກັບບັນຫານີ້.

ກ່ອນທີ່ເຮົາຈະໄປຮູ້ກ່ຽວກັບບຸລິມະສິດພິເສດຈາກການຖືຄອງຮຸ້ນ ເຮົາຕ້ອງມາຮູ້ກັນກ່ອນວ່າ "ຮຸ້ນ" ໝາຍເຖິງ ທຶນຂອງບໍລິສັດທີ່ແບ່ງອອກເປັນສັດສ່ວນທີ່ມີມູນຄ່າເທົ່າກັນ, ຊຶ່ງຜູ້ຖືຮຸ້ນມີຖານະເປັນເຈົ້າຂອງບໍລິສັດ, ຈະໄດ້ຮັບສິດ ແລະ ຜົນປະໂຫຍດ ຕາມອັດຕາສ່ວນທີ່ຕົນຖືຄອງ. ບຸລິມະສິດພິເສດ ຫຼືເອີ້ນວ່າ ສິດພິເສດ ຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບ ມີລາຍລະອຽດດັ່ງລຸ່ມນີ້:

1. ມີສິດໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວ ຫຼື ຜົນການດຳເນີນງານຂອງບໍລິສັດ;
2. ມີສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຊຶ່ງໃນກອງປະຊຸມດັ່ງກ່າວ ຜູ້ຖືຮຸ້ນມີສິດໃນການອອກຄຳຄິດຄຳເຫັນ ແລະ ລົງຄະແນນສຽງເຫັນດີ ຫຼື ບໍ່ເຫັນດີ ຕໍ່ມະຕິສຳຄັນຕ່າງໆທາງທຸລະກິດຂອງບໍລິສັດ;
3. ມີສິດອອກສຽງໃນການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຄະນະສະພາຜູ້ບໍລິຫານ ແລະ ຜູ້ອຳນວຍການ;
4. ມີສິດຈອງຊື້ຮຸ້ນທີ່ອອກໃໝ່ຂອງບໍລິສັດ ເມື່ອບໍລິສັດຕ້ອງການອອກຮຸ້ນເພີ່ມທຶນ ໃນລາຄາ ແລະ ຈຳນວນຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ;
5. ມີສິດໄດ້ຮັບເງິນປັນຜົນຕາມອັດຕາສ່ວນທີ່ຕົນຖືຄອງຮຸ້ນ ໃນກໍລະນີທີ່ບໍລິສັດມີຜົນກຳໄລ ແລະ ມີມະຕິຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນໃນການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ.

ການກຳນົດສິດຂອງຜູ້ຖືຮຸ້ນທີ່ກ່າວມາຂ້າງເທິງນີ້ ກໍ່ແມ່ນເພື່ອຮັບປະກັນໃຫ້ຜູ້ຖືຮຸ້ນສາມາດກວດສອບ, ກວດກາການດຳເນີນງານຂອງບໍລິສັດທີ່ຕົນຖືຄອງຮຸ້ນຢູ່ນັ້ນ ແລະ ມີສິດຕັດສິນໃຈຕໍ່ບັນຫາສຳຄັນໃນການດຳເນີນງານຂອງບໍລິສັດດັ່ງກ່າວ, ຊຶ່ງທັງໝົດກໍ່ແມ່ນເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ຖືຮຸ້ນຂອງບໍລິສັດດັ່ງກ່າວນັ້ນເອງ. ແຕ່ຜູ້ລົງທຶນຄວນຄຳນຶງສະເໝີວ່າ **"ທຸກການລົງທຶນແມ່ນມີຄວາມສ່ຽງ, ຜູ້ລົງທຶນຄວນສຶກສາຂໍ້ມູນໃຫ້ຖີ່ຖ້ວນກ່ອນຕັດສິນໃຈລົງທຶນ".**

**ໝາຍເຫດ:** ທ່ານສາມາດສອບຖາມຂໍ້ມູນລະອຽດ ກ່ຽວກັບການລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນໄດ້ທີ່ ສຳນັກງານ ຄະນະກຳມະການຄຸ້ມຫຼັກຊັບ ຢູ່ທີ່: ຕຶກສູນການຄ້າສີເມືອງ, ຊັ້ນ 3, ບ້ານ ເພັຍວັດ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ຫຼື ໂທສອບຖາມໄດ້ທີ່ເບີ :021-217770 ໃນໂມງລັດຖະການ ແລະ ສາມາດຕິດຕາມຂໍ້ມູນຕ່າງໆກ່ຽວກັບວຽກງານຕະຫຼາດທຶນໄດ້ທີ່ ເວັບໄຊທ໌: www.lsc.gov.la; ລາຍການໂທລະພາບ ທຊລ 1: ເສັ້ນທາງສູ່ຕະຫຼາດທຶນ, ອອກອາກາດທຸກໆວັນອາທິດ ເວລາ 20:10 - 20:40 ໂມງ ແລະ ວັນພະຫັດ (ນຳເອົາເທັບຂອງວັນອາທິດມາອອກອາກາດຊໍ້າຄືນ) ເວລາ 09:00 - 09:30 ໂມງ; Facebook: ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບລາວ ແລະ Youtube: ລາຍການເສັ້ນທາງສູ່ຕະຫຼາດທຶນລາວ.

---

[1] "ຮຸ້ນ" ໃນບົດຄວາມນີ້ ໝາຍເຖິງ ຮຸ້ນສາມັນ (Common Stock)